# ຜົນກະທົບຂອງພະຍາດ ພ ຕ ພ

- ຖ້າປ່ອຍໃຫ້ເປັນ ພຕພ ໂດຍບໍ່ມີການປິ່ນປົວ ຈະເຮັດໃຫ້ແຜ່ລາມໄປຫາຄູ່ຮ່ວມນອນ ແລະ ຄົນອື່ນໆ ແລະ ອາດເປັນຜົນສະທ້ອນໄລຍະຍາວຕໍ່ສຸຂະພາບອີກດ້ວຍ.
- ບໍ່ໄດ້ປິ່ນປົວພະຍາດເຊັ່ນ: ຊີຟີລິສ ຈະເຮັດໃຫ້ລູກຕາຍໃນທ້ອງ, ໃນໄລຍະຖືພາ 25% (1 ໃນ 4) ຂອງການຖືພາ, ໜຶ່ງໃນເຊື້ອພະຍາດ HVP (ພະຍາດຫອນໄກ່) ເຊິ່ງເປັນສາເຫດຂອງມະເຮັງປາກມົດລູກ.
- ນອກຈາກນັ້ນ ຍັງມີໜອງໃນແທ້ ແລະ ທຽມ ທີ່ມີອາການແຊກຊ້ອນເຮັດໃຫ້ອັກເສບຜົ້ງທອງນ້ອຍໃນຜູ້ຍິງ, ຍັງເຮັດໃຫ້ມີການຖືພານອກພົກ ແລະ ເປັນສາເຫດໃຫ້ມີລູກຍາກອີກດ້ວຍ ແລະ ມີຄວາມສ່ຽງສູງໃນການຕິດເຊື້ອ HIV/AIDs.



**1361**
**137**

ໃຫ້ຄຳປຶກສາກ່ຽວກັບສຸຂະພາບທາງເພດ, ສຸຂະພາບຈະເລີນພັນ, ພະຍາດຕິດຕໍ່ທາງເພດສຳພັນ, HIV/AIDS, ສຸຂະພາບຈິດ

vycentre@yahoo.com
52174490 & 22661218
VWYC Fans
VWYC_Laos
vwyc fans
www.vwyclaos.org

**ທ່ານສາມາດເຂົ້າມາຮັບຄຳປຶກສາໄດ້ທີ່ ຫ້ອງກວດສຸຂະພາບໄວໜຸ່ມ**

**ເປີດບໍລິການທຸກໆມື້ (ວັນຈັນ-ສຸກ)**
**ເວລາ8:30-16:30 ໂມງ**
ບໍລິການທີ່ຖືກຕ້ອງ ເປັນມິດ ແລະ ປິດລັບ
**ໂທ 021 252887**

**ຫ້ອງກວດສຸຂະພາບຕັ້ງຢູ່:**
- ບ້ານສີຫອມ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ຕິດກັບ ສີ່ແຍກໄຟແດງປາກປ່າສັກ
- ກົງກັນຂ້າມກັບທະນາຄານພັດທະນາລາວ

# ພະຍາດຕິດຕໍ່ທາງເພດສຳພັນ "ພ ຕ ພ"



**ສາມາດສົ່ງຂໍ້ຄວາມມາຂໍຮັບຄຳປຶກສາໄດ້ທີ່**
**ເບີ 020 52174490**
**020 22661218**

## ພະຍາດຕິດຕໍ່ທາງເພດສຳພັນ “ພ ຕ ພ”

- ພ.ຕ.ພ ແມ່ນພະຍາດທີ່ຕິດຕໍ່ທີ່ເກີດມາຈາກການຮ່ວມເພດລະຫວ່າງຍິງ-ຊາຍ ແລະ ເພດດຽວກັນ ໂດຍບໍ່ໄດ້ປ້ອງກັນເຊັ່ນ: ທາງຊ່ອງຄອດ, ຮູທະວານ ແລະ ປາກ ກັບຜູ້ທີ່ມີເຊື້ອ ແລະ ນອກຈາກນັ້ນບາງພະຍາດຍັງສາມາດຕິດຕໍ່ຈາກທາງການສຳພັດ ເຖິງແມ່ນວ່າຈະມີການປ້ອງກັນກໍ່ຕາມ.
- ພ.ຕ.ພ ມີຫຼາຍກວ່າ 30 ປະເພດ (ຊະນິດ) ເຊິ່ງອາດແມ່ນເຊື້ອຈຸລິນຊີ, ຈຸລະໂຣກ ແລະ ແມ່ກາຝາກ.
- ພ.ຕ.ພ ທີ່ພົບເຫັນເລື້ອຍໆຈະມີ: ໜອງໃນແທ້ ແລະ ໜອງໃນທຽມ, ຫອນໄກ່ອະໄວຍະວະເພດຍິງ-ຊາຍ, ພະຍາດຕຸ່ມນ້ຳໃສ ແລະ ອື່ນໆ.



## ອາການຂອງຄົນທີ່ຕິດເຊື້ອ ພ ຕ ພ

- ພ.ຕ.ພ ບາງຊະນິດແມ່ນບໍ່ມີອາການສະແດງອອກຫຍັງເລີຍ ແລະ ສາມາດສົ່ງຕໍ່ພະຍາດຫາຄູ່ຮ່ວມນອນໄດ້ໂດຍບໍ່ຮູ້ຕົວ. ສະນັ້ນ, ຖ້າຄູ່ນອນຂອງທ່ານໄດ້ຖືກບົ່ງມະຕິວ່າເປັນ ພຕພ ທ່ານຕ້ອງມາກວດ ແລະ ຮັບການປິ່ນປົວ ເຖິງແມ່ນວ່າທ່ານບໍ່ມີອາການຫຍັງສະແດງອອກ.

ຫຼັງຈາກມີເພດສຳພັນທີ່ບໍ່ປອດໄພແລ້ວຫາກວ່າມີອາການດັ່ງຕໍ່ໄປນີ້ຄື:

1.ມີໜອງຍ້ອຍ ຫຼື ລົງຂາວຜິດປົກກະຕິ.
2.ມີອາການຍ່ຽວເຈັບ - ແສບ.
3.ມີອາການຄັນ ຕາມອະໄວຍະວະເພດ.
4.ມີຕຸ່ມຂຶ້ນຕາມອະໄວຍະວະເພດ, ປາກ ແລະ ຮູທະວານ ( ກໍລະນີມີການຮ່ວມເພດຫຼາຍທາງ ).
5.ມີບາດແຜຕາມອະໄວຍະວະເພດ.



## ສິ່ງທີ່ຄວນປະຕິບັດ

- ເຂົ້າໄປພົບແພດເພື່ອຂໍຄຳປຶກສາ, ກວດ ແລະ ປິ່ນປົວໃຫ້ຖືກຕ້ອງ.
- ບໍ່ຄວນໄປຊື້ຢາມາກິນເອງ.
- ກິນຢາຕາມໝໍສັ່ງໃຫ້ຄົບ.
- ປິ່ນປົວຄູ່ຮ່ວມນອນນຳ.
- ຫຼີກລ້ຽງການມີເພດສຳພັນ
- ໃນເວລາຊ່ວງປິ່ນປົວ.

ໝາຍເຫດ: ຖ້າບໍ່ໄດ້ຮັບການປິ່ນປົວ ອາດຈະເຮັດໃຫ້ມີອາການແຊກຊ້ອນຕາມມາ.

## ວິທີການປ້ອງກັນ

- ບໍ່ຄວນມີຄູ່ຮ່ວມນອນຫຼາຍຄົນ.
- ຄວນປິ່ນປົວໃຫ້ຖືວິທີຕາມແພດສັ່ງ.
- ຄວນໃສ່ຖົງຢາງອະນາໄມທຸກຄັ້ງ ເວລາມີເພດສຳພັນ.

ໝາຍເຫດ: ບາງພະຍາດ ຖົງຢາງອານາໄມ ກໍ່ບໍ່ສາມາດປ້ອງກັນໄດ້ 100 %



ຫ້ອງກວດສຸຂະພາບໄວໜຸ່ມ ຕັ້ງຢູ່: ບ້ານ ສີຫອມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສີ່ແຍກໄຟແດງວິທະຍາໄລປາກປ່າສັກ, ກົງກັນຂ້າມກັບ ທະນາຄານພັດທະນາລາວ.
ສາມາດໂທເບີ: 021 252887 (ຫຼື ສາມາດຂໍຄຳປຶກສາໄດ້ທີ່ເບີ 1361 ສຳລັບທ່ານຍິງ ແລະ 137 ສຳລັບທ່ານຊາຍ ໂທຟຣີ)